# ບໍລິການຊ່ວຍເຫຼືອດ້ານພາສາ

RTD ດຳເນີນການສຶກສາຄົ້ນຄວ້າຄ່າຂົນສົ່ງທົ່ວລັດ ແລະການວິເຄາະທີ່ສະເໝີພາບເພື່ອປະເມີນຄ່າຂົນສົ່ງຂອງຕົນ. ຍິນດີຕ້ອນຮັບການເຂົ້າຮ່ວມ ແລະ ຄຳຕິຊົມຂອງທ່ານ. ຈະສະໜອງການບໍລິການດ້ານພາສາທີ່ບໍ່ເສຍຄ່າ. ຖ້າທ່ານຕ້ອງການມີສ່ວນຮ່ວມ ຫຼື ຕ້ອງການຂໍ້ມູນເພີ່ມຕື່ມ, ກະລຸນາສົ່ງອີເມວຫາ farestudy@rtd-denver.com ຫຼື ໂທ 303.299.6000. ທາງເລືອກອື່ນ, ໃຫ້ປະຕິບັດຕາມຄຳແນະນຳລຸ່ມນີ້ເພື່ອປ່ຽນແປງອິນເຕີເນັດບຣາວເຊີຂອງທ່ານຈາກອັງກິດເປັນພາສາທີ່ທ່ານຕ້ອງການ. ຈາກນັ້ນ, ກັບຄືນຫາເວັບເພຈສຶກສາຄົ້ນຄວ້າຄ່າຂົນສົ່ງ (Fare Study) ທີ່ rtd-denver.com/farestudy ສຳລັບການອັບເດດໂຄງການ ແລະ ມີສ່ວນຮ່ວມ.

# ວິທີການປ່ຽນພາສາຂອງບຣາວເຊີອິນເຕີເນັດຂອງທ່ານ


Google Chrome ........ 1
Mozilla Firefox ........ 4
Microsoft Edge ........ 6
Apple Safari ........ 9


## Google Chrome

1. ເປີດບຣາວເຊີ Google Chrome.
2. ກົດໃສ່ໄອຄອນ  ຢູ່ແຈຂວາເທິງສຸດຂອງໜ້າຕ່າງ.
3. ເລືອກ **Settings** ຈາກເມນູເລື່ອນລົງທີ່ປາກົດຂຶ້ນມາ.
4. ໃນໜ້າຕ່າງຖັດໄປ, ກົດ 

ທີ່ເລື່ອນລົງມາ.
5. ເລືອກສ່ວນ *Languages*.

6. ໃນສ່ວນ *Languages*, ກົດໃສ່ **ລູກສອນຊີ້ລົງ** ທີ່ຢູ່ເບື້ອງຂວາມືຂອງຕົວເລືອກ *Language*.




7. ກົດໃສ່ລິ້ງ Add languages ໃນເມນູທີ່ປາກົດຂຶ້ນມາ.

8. ໃນໜ້າຈໍຖັດໄປ, ກົດໝາຍຕິກໃສ່ກ່ອງທີ່ຢູ່ຖັດຈາກໜຶ່ງ ຫຼື ຫຼາຍພາສາ (A), ແລະຈາກນັ້ນກົດປຸ່ມ **Add** (B).



9. ພາສາທີ່ທ່ານເລືອກໃໝ່ ຄວນຈະປາກົດຂຶ້ນຢູ່ໃນເມນູ *Language*. ເພື່ອເລືອກໜຶ່ງພາສາ, ໃຫ້ກົດໃສ່ໄອຄອນ ⋮ ທີ່ຢູ່ເບື້ອງຂວາຂອງພາສາ ແລະ ໝາຍຕິກໃສ່ກ່ອງທີ່ຢູ່ຖັດຈາກ **Display Google Chrome in this language**.




10. ກົດໃສ່ **Relaunch** ຫຼື ປິດ ແລະ ເປີດບຼາວເຊີ Chrome ຂອງທ່ານຄືນໃໝ່ ເພື່ອສະແດງພາສາໃໝ່.

## Mozilla Firefox

1. ເປີດບຼາວເຊີ Mozilla Firefox.

2. ກົດໃສ່ໄອຄອນ  ທີ່ຢູ່ແຈເບື້ອງຊ້າຍດ້ານເທິງຂອງໜ້າຕ່າງບຼາວເຊີ.

3. ເລືອກ **Settings** ຈາກເມນູເລື່ອນລົງທີ່ປາກົດຂຶ້ນມາ.

4. ພາຍໃຕ້ສ່ວນ *Language*, ໃຫ້ກົດໃສ່ປຸ່ມ 

.




5.

6. ໃນໜ້າຕ່າງດັ່ງກ່າວ, ກົດໃສ່ **Select a language to add.**



7. ກົດໃສ່ພາສາທີ່ທ່ານຕ້ອງການ (A), ກົດ **Add**, ແລະ ຈາກນັ້ນກົດໃສ່ປຸ່ມ **OK** (B).




8. ຣີສະຕາດບຼາວເຊີຂອງທ່ານ ເພື່ອສະແດງພາສາໃໝ່.

## Microsoft Edge

1. ເປີດບຣາວເຊີ Microsoft Edge.
2. ກົດໃສ່ **ການຕັ້ງຄ່າແລະອີກຫຼາຍໄອຄອນ** ຢູ່ແຈເບື້ອງຂວາດ້ານເທິງຂອງໜ້າຕ່າງບຣາວເຊີ.
3. ໃນເມນູເລື່ອນລົງ, ທີ່ຢູ່ໃກ້ເບື້ອງລຸ່ມ, ເລືອກ **Settings**.



4. ຢູ່ເບື້ອງຊ້າຍຂອງໜ້າຈໍ, ພາຍໃຕ້ *ການຕັ້ງຄ່າ*, ກົດໃສ່ **Languages**.




5. ພາຍໃຕ້ສ່ວນ *Languages*, ກົດໃສ່ປຸ່ມ **Add Languages**.



6. ໃນຄໍາແນະນໍາທີ່ປາກົດຂຶ້ນມາ, ເລືອກພາສາທີ່ທ່ານຕ້ອງການໃຫ້ສະແດງໃນບຼາວເຊີຂອງທ່ານ, ແລະ ຈາກນັ້ນກົດໃສ່ປຸ່ມ **Add**.




7. ກັບໄປຍັງສ່ວນ ພາສາ, ຊອກຫາພາສາທີ່ທ່ານຕ້ອງການ ແລະ ກົດໃສ່ໄອຄ  ທີ່ຢູ່ດ້ານຂວາມື. ຈາກນັ້ນ, ໝາຍຕິກໃສ່ກ່ອງທີ່ຢູ່ຖັດຈາກ **Display Microsoft Edge in this language**.
8. ກົດປຸ່ມ 

ຫຼື ປິດ ແລະ ເປີດບຼາວເຊີຄືນໃໝ່.

**Apple Safari**

Safari ແມ່ນຖືກລວມເຂົ້າໃສ່ macOS. ດ້ວຍເຫດນີ້, ທ່ານຕ້ອງໄດ້ເຂົ້າໄປໃນການຕັ້ງຄ່າພາສາໃນ Mac ຂອງທ່ານ ເພື່ອປ່ຽນພາສາທີ່ຈະສະແດງໃນ Safari.

1. ຢູ່ແຈ/ຊ້າຍດ້ານເທິງຂອງໜ້າຈໍ, ໃຫ້ກົດໄອຄອນ Apple ເພື່ອເປີດເມນູຂອງ Apple ແລະ ເລືອກທີ່ **System Preferences**




2. ກົດໃສ່ **Language & Region** ໃນໜ້າຕ່າງ *System Preferences*.



3. ໃນເມນູ Language & Region, ພາຍໃຕ້ **Preferred languages**, ກົດໃສ່ **ເຄື່ອງໝາຍ** + ທີ່ຢູ່ໃນປຸ່ມ.




4. ໃນເມນູແບບເລື່ອນລົງ, ເລືອກ ພາສາ ແລະ ຈາກນັ້ນກົດປຸ່ມ **Add**.



5. ທ່ານຄວນໄດ້ຮັບຄໍາແນະນໍາໃຫ້ປ່ຽນໄປເປັນພາສາໃໝ່. ຖ້າບໍ່ດັ່ງນັ້ນ, ໃຫ້ກົດຄ້າງໄວ້ ແລະ ລາກພາສາໃໝ່ໄປຍັງເທິງສຸດຂອງເມນູໃນໜ້າຈໍກ່ອນໜ້າ (ດັ່ງທີ່ສະແດງໄວ້ໃນຂັ້ນຕອນທີ 3).




6. ກົດໃສ່ປຸ່ມ **Restart Now** ສໍາລັບການຕັ້ງຄ່າພາສາໃໝ່ ເພື່ອໃຫ້ມີສາມາດໃຊ້ໄດ້.

